ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********◇********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ

ເລກທີ 197 /ຄຊກລ.ຄສ

ນະຄອນຫຼວງວຽງຈັນ, ວັນທີ: 25 JUN 2018

## ບົດລາຍງານ

ການຕິດຕາມ ປະເມີນຜົນ ການຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ຢູ່ແຂວງສາລາວັນ, ເຊກອງ, ຈໍາປາສັກ ແລະ ຄໍາມ່ວນ, ວັນທີ 8-15/6/2018.

- ອີງຕາມ ແຜນປະຕິບັດງານ ປະຈໍາປີ 2018 ຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ.
- ອີງຕາມ ການຕົກລົງເຫັນດີຂອງຫົວໜ້າຫ້ອງການ ຄຊກລ, ສະບັບເລກທີ 153/ຄຊກລ.ຫກ, ລົງວັນທີ 18 ພຶດສະພາ 2018.

ການຕິດຕາມ ການຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ຄັ້ງນີ້ ແມ່ນການຕິດຕາມ ເພື່ອຊຸກຍູ້-ປັບປຸງວຽກງານໂຄສະນາ ພ້ອມນີ້ ຍັງໄດ້ ປະເມີນຜູ້ຟັງລາຍການດັ່ງກ່າວ ເຊິ່ງມີລາຍລະອຽດດັ່ງນີ້:

**I ຈຸດປະສົງ:**

- ເພື່ອລົງຕິດຕາມ ການປະຕິບັດວຽກງານຕົວຈິງກ່ຽວກັບການຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ເປັນໄປຕາມ ແນວທາງຍຸດທະສາດແຫ່ງຊາດຫຼືບໍ່ ແລະ ມີຄວາມຄືບໜ້າຄືແນວໃດ?.
- ເພື່ອຕິດຕາມ ແລະ ປະເມີນຜູ້ຟັງລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ແລະ ຄວນມີການປັບປຸງແນວໃດ ເພື່ອໃຫ້ລາຍການດັ່ງກ່າວສາມາດເຂົ້າເຖິງກຸ່ມເປົ້າໝາຍໄດ້ດີຂຶ້ນກວ່າເກົ່າ.

**II ຜູ້ເຂົ້າຮ່ວມ:** ຫ້ອງການ ຄຊກລ ສູນກາງ ແລະ ກະຊວງຖະແຫຼງຂ່າວ, ວັດທະນາທໍາ ແລະ ທ່ອງທ່ຽວ.

**III ຜົນຂອງການລົງຕິດຕາມກິດຈະກໍາ ສາມາດສັງເກດໄດ້ດັ່ງນີ້:**

1) ຈຸດດີ:

- ຂອດການປະສານງານ ເພື່ອລົງຕິດຕາມປະເມີນຜົນໃນຄັ້ງນີ້ ລະຫວ່າງຫ້ອງການ ຄຊກລ ສູນກາງ, ກະຊວງຖະແຫຼງຂ່າວ, ວັດທະນາທໍາ ແລະ ທ່ອງທ່ຽວ, ສະຖານນີວິທະຍຸ ແລະ ບ້ານເປົ້າໝາຍແມ່ນ ໄດ້ຮັບການຮ່ວມມືເປັນຢ່າງດີ.
- ລາຍການວິທະຍຸ ໂຄສະນາຜົນຮ້າຍຂອງ ລບຕ ແມ່ນໄດ້ດໍາເນີນຕາມແບບແຜນ ແບບຕໍ່ເນື່ອງ ແລະ ບັນດານັກຈັດລາຍການ ໄດ້ເອົາໃຈໃສ່ໃນການຊອກຫາຂໍ້ມູນ ເພື່ອປ້ອນໃນລາຍການ ໄດ້ມີການປະສານງານກັບຫຼາຍພາກສ່ວນ ທີ່ກ່ຽວຂ້ອງ.

-ຜູ້ຟັງສາມາດຮັບຟັງ ລາຍການດັ່ງກ່າວໄດ້ດີ ຄື້ນສັນຍານແຈ້ງດີສົມຄວນ ແລະ ເຂົ້າໃຈຂໍ້ຄວາມ, ຂໍ້ມູນທີ່ປະກອບໃນ ການຈັດລາຍການ.

- ຜູ້ຟັງບາງກຸ່ມແມ່ນມັກຟັງລາຍການວິທະຍຸ ແລະ ບອກວ່າເປັນການໃຊ້ຈ່າຍທີ່ປະຢັດ ແຕ່ຮູ້ມູນກວ້າງຂວາງດີ, ບໍ່ເສຍເວລາ ເຮັດວຽກໄປນຳກໍ່ສາມາດຮັບຟັງໄດ້.

2) ຂໍ້ຄວນປັບປຸງ:

- ອຸປະກອນ ທີ່ປະກອບເຂົ້າໃນການຈັດລາຍການ, ອຸປະກອນຮັບໃຊ້ທີມງານ ແລະ ອຸປະກອນແຈກຢາຍ ເຫັນວ່າຍັງບໍ່ພຽງພໍກັບຄວາມຈຳເປັນຂອງໜ້າວຽກ.
- ການລາຍງານ ແມ່ນມີການຈັດຕັ້ງເປັນລະບົບ, ມີກຳນົດເວລາທີ່ຊັດເຈນ ແຕ່ໃນການຈັດຕັ້ງປະຕິບັດຕົວຈິງແມ່ນບໍ່ສາມາດປະຕິບັດໄດ້ ການລາຍງານ ມີຄວາມຊັກຊ້າຫຼາຍ ບາງຄັ້ງຕ້ອງໄດ້ທວງຖາມ.
- ບາງສະຖານີ ການປະສານງານ ກັບບັນດາພາກສ່ວນກ່ຽວຂ້ອງໃນການເກັບກຳຂໍ້ມູນ ແມ່ນຍັງບໍ່ທັນໄດ້ດີເທົ່າທີ່ຄວນ ເຮັດໃຫ້ຂໍ້ມູນທີ່ນຳມາຈັດລາຍການມີຈຳກັດ.
- ຜູ້ຟັງບາງກຸ່ມ ເປັນຕົ້ນແມ່ນເດັກນ້ອຍມັກກິດຈະກຳຂອງທີມງານໂຄສະນາເຄື່ອນທີ່ ຫຼາຍກວ່າຟັງລາຍການວິທະຍຸ ເພາະເຫັນພາບປະຈັກຕາ, ບາງກຸ່ມບໍ່ມີວິທະຍຸ ເປັນເຫດໃຫ້ບໍ່ສາມາດຮັບຟັງໄດ້.

ດັ່ງນັ້ນ ຈິ່ງໄດ້ສະເໜີ ມາຍັງທ່ານເພື່ອຮັບຊາບ

| | |
|---|---|
| ເຫັນດີ ຫົວໜ້າຫ້ອງການ | ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ |
| ຫ້ອງການ ຄອກລ | ສົມ ສະໜັນ |
| ບຸນພະມິດ ໂສມວິຈິດ<br>Mr.Bounphamith SOMVICHITH | |